
ຖືກຂົ່ມເຫັງ
ແຕ່
ບໍ່ຖືກປະຖິ້ມ
ບົດຮຽນທີ 1 ສໍາລັບເດືອນມັງກອນ ທີ3, 2026





“ຈົ່ງຊົມຊື່ນຍິນດີໃນ
ອົງພຣະຜູ້ເປັນເຈົ້າທຸກ
ເວລາ ເຮົາຂໍຢໍ້າອີກວ່າ
ຈົ່ງຊົມຊື່ນຍິນດີເຖີ້ນ!”

ຟລປ 4:4







ຜ່ານທາງການຮັບໃຊ້ນີ້, ອັກຄະສາວົກໂປໂລມຸ່ງໝັ້ນທີ່ຈະປະກາດໃຫ້ແກ່ທຸກຄົນທີ່ຍອມຟັງເພິ່ນ, ວ່າມີຜູ້ດຽວເທົ່ານັ້ນທີ່ສາມາດເຮັດໃຫ້ໂລກ ແລະ ສະຫວັນສາມາດເຊື່ອມຕໍ່ກັນໄດ້ ນັ້ນກໍຄື:ພຣະເຢຊູ ຜູ້ຊ່ວຍໃຫ້ລອດ

ໃນຈົດໝາຍທີ່ເພິ່ນໄດ້ຂຽນເຖິງເມືອງຟີລິບປອຍ ແລະ ໂກໂລຊາຍ, ລາວໄດ້ເຮັດທຸກວິທີທາງເພື່ອຊ່ວຍໃຫ້ຄຣິດຕະຈັກ ມີຄວາມໃກ້ຊິດກັນກັບສະຫວັນ, ແລະ ເຮັດໃຫ້ຄຣິສຕຽນມີຄວາມໃກ້ຊິດກັບຄົນອື່ນຫລາຍຂຶ້ນ.

ໃນການເຮັດແບບນີ້, ລາວໄດ້ເຮັດໃຫ້ພວກເຮົາເຫັນເຖິງວິທີທີ່ຈະເຮັດໃຫ້ຄຣິດຕະຈັກຂອງພຣະເຈົ້າໃນປະຈຸບັນ ຈະສາມາດລວມເປັນໜຶ່ງດຽວກັນໄດ້ແນວໃດ. ເພື່ອເຮັດໃຫ້ພັນທະກິດທີ່ພຣະເຢຊູໄດ້ຊົງມອບໝາຍໃຫ້ນັ້ນສຳເລັດຄົບຖ້ວນຢູ່ເທິງແຜ່ນດິນໂລກນີ້

ຜູ້ທີ່ຂຽນຈົດໝາຍ:

- ໂປໂລ ຜູ້ທີ່ຕິດຄຸກ
- ທູດ ຜູ້ທີ່ຖືກລ່າມໂສ້

ຜູ້ຮັບຈົດໝາຍ:

- ປະຫວັດຂອງເມືອງຟີລິບປອຍ
- ປະຫວັດຂອງເມືອງໂກໂລຊາຍ
- ຄຣິດຕະຈັກຂອງເມືອງຟີລິບປອຍ ແລະ ໂກໂລຊາຍ

# ຜູ້ທີ່ຂຽນຈົດໝາຍ



# ໂປໂລ ຜູ້ທີ່ຕິດຄຸກ

"ຈາກໂປໂລຜູ້ຖືກຄຸກຢູ່ ເພື່ອເຫັນແກ່ພຣະຄຣິດເຈົ້າເຢຊູ ແລະ ຈາກຕີໂມທຽວນ້ອງຊາຍຂອງພວກເຮົາ" (ຟລມ 1:1)



ໃນລະຫວ່າງການຕິດຄຸກຄັ້ງທຳອິດໃນກຸງໂຣມ– ລະຫວ່າງປີ ຄ.ສ 60 ແລະ 62 AD – ອັກຄະສະວົກໂປໂລໄດ້ຂຽນຈົດໝາຍຢ່າງໜ້ອຍ 5 ສະບັບ: ເຖິງຊາວເອເຟໂຊ, ເຖິງຊາວຟີລິບປອຍ, ເຖິງຊາວໂກໂລຊາຍ, ເຖິງຊາວຟີເລໂມນ, ແລະ ເຖິງຄຣິດຕະຈັກແຫ່ງ ລາວດີເຊຍ (ເຊິ່ງຈົດໝາຍສະບັບນີ້ບໍ່ໄດ້ຮອດພວກເຮົາ).





ເນື່ອງຈາກວ່າບໍ່ໄດ້ມີຂໍ້ຫາໃດໆທີ່ຮ້າຍແຮງຕໍ່ເພິ່ນ, ເພິ່ນຈຶ່ງໄດ້ຮັບອະນຸຍາດໃຫ້ພັກອາໄສຢູ່ໃນເຮືອນເຊົ່າແຫ່ງໜຶ່ງ ໂດຍມີທະຫານຊາວໂຣມັນເຝົ້າເບິ່ງຢູ່ຕະຫລອດເວລາ (ກຈກ 28:16). ສິ່ງນີ້ເຮັດໃຫ້ເພິ່ນສາມາດປະກາດຂ່າວປະເສີດຕໍ່ໄປໄດ້, ແມ້ກະທັ້ງປະກາດໃຫ້ກັບພວກທະຫານທີ່ເຝົ້າຮັກສາເພິ່ນເອງ (ຟລປ. 1:13-17).

ເມື່ອເຮົາພິຈາລະນາເຖິງຈົດໝາຍທີ່ເພິ່ນຝາກໄປເມືອງຕ່າງໆແລ້ວ, ເຮົາຈະເຫັນວ່າ ມີຫລາຍຄົນທີ່ຮ່ວມມືກັບເພິ່ນ (ກລຊ. 4:7-14; ຟີເລໂມນ. 23-24). ນອກຈາກນີ້ເພິ່ນຍັງໄດ້ຕິດຕໍ່ກັບຄົນໃນພຣະຣາຊສຳນັກຂອງ ກະສັດກາຍຊາ ນຳອີກ.
(ຟລປ. 4:22).

ໂປໂລຫວັງວ່າຈະໄດ້ຮັບການປ່ອຍໂຕໄວໆ (ຟລມ. 22), ເຊິ່ງເປັນຄວາມຫວັງທີ່ເພິ່ນບໍ່ມີອີກຕໍ່ໄປແລ້ວສຳລັບການຕິດຄຸກຄັ້ງທີ 2 (2 ຕມທ. 4:6).

# ທູດ ຜູ້ທີ່ຖືກລ່າມໂສ້

"ຂ້າພະເຈົ້າຈຶ່ງເປັນຣາຊທູດຜູ້ຕິດໂສ້ຢູ່ ເພື່ອຂ້າພະເຈົ້າຈະປະກາດຂ່າວປະເສີດນັ້ນດ້ວຍໃຈກ້າຫານຕາມທີ່ຂ້າພະເຈົ້າຄວນຈະກ່າວ"
(ອຟຊ 6:20)



ນັບຕັ້ງແຕ່ວິນາທີ ທີ່ເພິ່ນຕັດສິນໃຈເຂົ້າເປັນສ່ວນຣາຊທູດຂອງພຣະຄຣິດນັ້ນ, ຊີວິດຂອງລາວກໍ່ບໍ່ໄດ້ສະດວກສະບາຍເລີຍ (2 ຄຣທ 6:4-5).



ພຣະຄຳພີບັນທຶກວ່າ ໂປໂລ ໄດ້ຖືກຕິດຄຸກພຽງແຕ່ 3 ຄັ້ງກ່ອນທີ່ຈະຖືກສົ່ງໂຕໄປທີ່ກຸງໂຣມ. : ທີ່ເມືອງ ຟີລິບປອຍ (ກຈກ 16:22-24); ທີ່ກຸງເຢຣູຊາເລັມ (ກຈກ 23:10); ທີ່ເມືອງ ກາຍຊາເຣຍ (ກຈກ 23:33-35). ແຕ່ທີ່ແນ່ນອນກໍ່ຄື ເພິ່ນໄດ້ຕິດຄຸກຫລາຍກວ່ານັ້ນ (2 ກຣທ 11:23).

ໃນທ່າມກາງຄວາມທຸກຍາກລຳບາກທັງໝົດນີ້, ໂປໂລບໍ່ເຄີຍຖືວ່າຕົນເອງໝົດສິ້ນຫວັງ (2 ຄຣທ 4:7-9). ເມື່ອບໍ່ສາມາດປະກາດໄດ້ແບບອິດສະຫລະ, ທ່ານຈຶ່ງກາຍມາເປັນ "ທູດ ຜູ້ທີ່ຖືກລ່າມໂສ້" (ອຟຊ. 6:20).





ທັດສະນະຄະຕິຂອງ ອັກຄະສາວົກໂປໂລ ເມື່ອເຮົາຕ້ອງທົນທຸກຍາກລຳບາກຈາກການປະກາດຂ່າວປະເສີດ, ພວກເຮົາຕ້ອງໄວ້ວາງໃຈໃນພຣະເຈົ້າຢ່າງສຸດກຳລັງ; ໃຫ້ພຣະຄຳຂອງພຣະອົງດັງກ້ອງຢູ່ໃນຈິດໃຈສະເໝີ (2 ຕມທ. 2:15); ແລະ ຍຶດໝັ້ນໃນພຣະວິນຍານບໍຣິສຸດ, ຜູ້ຊົງປະທານກຳລັງ ແລະ ຄວາມກ້າຫານໃຫ້ແກ່ພວກເຮົາ (ຊຄຣຢ. 4:6).



# ຜູ້ຮັບຈົດໝາຍ

“ອັກຄະສາວົກໂປໂລຮູ້ສຶກເຖິງຄວາມຮັບຜິດຊອບຢ່າງເລິກເຊິ່ງຕໍ່ຜູ້ທີ່ກັບໃຈພາຍໃຕ້ການຮັບໃຊ້ຂອງຕົນເອງ. ລາວໄດ້ປາຖະໜາຢ່າງຍິ່ງວ່າ ພວກເຂົາຈະຊື່ສັດຕໍ່ພຣະເຈົ້າ. ”ເພື່ອວ່າຂ້າພະເຈົ້າຈະໄດ້ຊື່ນຊົມຍິນດີໃນວັນຂອງພຣະຄຣິສ" ລາວໄດ້ເວົ້າວ່າ, ”ຂ້າພະເຈົ້າບໍ່ໄດ້ແລ່ນຢ່າໄຮ້ຄ່າ ແລະ ບໍ່ໄດ້ເຮັດວຽກຢ່າງໄຮ້ຄ່າ" ຟລປ 2:16. ລາວໄດ້ຮູ້ສຶກວ່າຖ້າຕົນເອງເຮັດວຽກບໍ່ໄດ້ສົມບູນ ແລະ ຖ້າຄຣິດຕະຈັກບໍ່ໄດ້ຮ່ວມມືກັບລາວໃນການຊ່ວຍຈິດວິນຍານໃຫ້ໄດ້ຮູ້ຈັກທາງແຫ່ງຄວາມລອດພົ້ນແລ້ວ ກໍ່ເປັນເລື່ອງທີ່ໜ◌້າເສຍດາຍ”

EGW (The Acts of the Apostles, p. 206)

# ປະຫວັດຂອງເມືອງຟີລິບປອຍ

“ໃນຄືນນັ້ນໂປໂລໄດ້ເຫັນນິມິດ ແລະ ໃນນິມິດນັ້ນເພິ່ນເຫັນຊາຍຊາວ
ມາເກໂດເນຍຄົນໜຶ່ງຢືນຢູ່ ແລະ ຮ້ອງຕໍ່ເພິ່ນວ່າ ຂໍທ່ານຂ້າມມາເມືອງ
ເມເກໂດເນຍພີ້...’ ” (ກຈກ 16:9)





ໃນການອອກເດີນທາງການປະກາດຄັ້ງທີ 2 ຂອງ ອຈ ໂປໂລ. ແຜນການຂອງລາວໄດ້ປ່ຽນໄປ ແລະ ພຣະວິນຍານບໍຣິສຸດກໍ່ ໄດ້ຊົງຊີ້ນຳທຸກກ້າວຍ່າງຂອງລາວ (ກຈກ 16:6-12):

1. ລາວເດີນທາງໄປເມືອງ ຟີເຄຍ (6)
2. ແຕ່ບໍ່ສາມາດເທດສະໜາຢູ່ທີ່ນັ້ນໄດ້ (6b)
3. ລາວຈຶ່ງໄປທີ່ແຂວງ ບີທີເນຍ (7a)
4. ແຕ່ພຣະວິນຍານບໍຣິສຸດບໍ່ອະນຸດຍາດໃຫ້ເພິ່ນເຂົ້າໄປ (7b)
5. ລາວຈຶ່ງໄດ້ໄປທີ່ເມືອງ ໂທອາດ ບ່ອນທີ່ລາວໄດ້ເຫັນນິມິດ (8-10)
6. ລາວໄດ້ໄປເກາະຊາໂມທາເກ (11a)
7. ແລະໄປທີ່ເມືອງ ເນອາໂປລີ (11b)
8. ໃນທີ່ສຸດ ກໍ່ມາເຖິງເມືອງ ຟີລິບປອຍ(12)




ເມືອງຟີລິບແມ່ນສະຖານທີ່ທີ່ພຣະວິນຍານຊົງເລືອກໃຫ້ເລີ່ມຕົ້ນການປະກາດຂ່າວປະເສີດໃນຢູໂຣບ. ໃນຖານະທີ່ເປັນເມືອງໂຣມັນຢ່າງເຕັມໂຕ ຊາວຟີລິບປອຍໄດ້ຮັບການຍົກເວັ້ນຈາກການເສຍພາສີ ແລະ ໄດ້ຖືສັນຊາດໂຣມັນ ໂດຍກຳເນີດ

# ປະຫວັດຂອງເມືອງຟີລິບປອຍ

"ໃນນິມິດນັ້ນ...ເພິ່ນເຫັນຊາຍມາເກໂດເນຍຄົນໜຶ່ງ ຢືນຢູ່ ແລະ ຮ້ອງຕໍ່ເພິ່ນວ່າ: ຂໍທ່ານມາເມືອງມາເກໂດເນຍພີ້ ເພື່ອຊ່ວຍພວກຂ້ານ້ອຍແດ່ທ້ອນ' " (Acts 16:9)



ຕາມທຳນຽມຂອງ ອຈ ໂປໂລແລ້ວ, ເມື່ອເຂົ້າມາເຖິງເມືອງໃໝ່ ລາວຈະໄປຢ້ຽມໂບດທຳມະສາລາ. But ແຕ່ວ່າໃນເມືອງຟີລິບປອຍແລ້ວ ບໍ່ມີໂບດທຳມະສາລາ! ແຕ່ໃນວັນສະບາໂຕ ພວກເຂົາໄດ້ພົບສະຖານທີ່ສຳລັບການນະມັດສະການ ແລະ ໃນບ່ອນນັ້ນພວກເຂົາໄດ້ເທດສະໜາໃຫ້ແກ່ຜູ້ຍິງທີ່ມາຊຸມນຸມນັ້ນ(ກຈກ 16:13).

ຈາກການຊຸມນຸມໃນຄັ້ງນັ້ນ ຜູ້ຄົນຈາກຢູໂຣບໄດ້ກັບໃຈ ຄື: ນ. ລີເດຍ, ນາງໄດ້ຮັບບັບຕິສະມາພ້ອມກັບສະມາຊິກຄອບຄົວທັງໝົດຂອງນາງ (ກຈກ 16:14-15).



ແຕ່ວ່າສັດຕູບໍ່ໄດ້ນິ້ງເສີຍ. ມີຍິງຖືກຜີສິງ ຈຶ່ງດູນໍໄດ້ ແລະ ທຳທ່າເປັນຜູ້ເຊື່ອ ແລະ ຕິດຕາມ ອຈ ໂປໂລ, ແຕ່ແທ້ຈິງແມ່ນເພື່ອຫາເງິນ. (ກຈກ 16:16-17). ເມື່ອ ອຈ ໂປໂລ ໄດ້ໄລ່ຜີສິງນັ້ນອອກແລ້ວ ບັນຫາຂອງພວກເຂົາກໍ່ໄດ້ເລີ່ມຕົ້ນຂຶ້ນ ໂດຍຫາເລື່ອງ ແລະ ຈັບ ອຈ ໂປໂລເຂົ້າຄຸກ (ກຈກ 16:18-24).



ແຕ່ໃນທີ່ສຸດ: ຜູ້ຄຸມຄຸກ ແລະ ຄອບຄົວຂອງລາວໄດ້ກັບໃຈ (ກຈກ 16:25-33). ສິ່ງນີ້ ຈຶ່ງເປັນສິ່ງທີ່ຮູ້ໂດຍບໍ່ຕ້ອງສົງໄສເລີຍວ່າ ແມ່ນຍ້ອນການຊີ້ນຳຂອງພຣະວິນຍານບໍຣິສຸດ.

# ປະຫວັດຂອງເມືອງ ໂກໂລຊາຍ

"ເພາະວ່າ ເຮົາມີໃຈຮັກພວກເຈົ້າທຸກຄົນ ເຈົ້າທັງຫລາຍໄດ້ຮັບສ່ວນຮ່ວມໃນພຣະຄຸນດ້ວຍກັນກັບເຮົາ ໃນການທີ່ເຮົາຖືກຈຳຈອງ ແລະ ໃນການກ່າວປ້ອງກັນ ໃຫ້ຂ່າວປະເສີດນັ້ນຕັ້ງໝັ້ນຄົງຢູ່" (ກລຊ 1:7)



ເອປາຟາ ເປັນເພື່ອນຮ່ວມງານຂອງ ອຈ ໂປໂລໃນລະຫວ່າງທີ່ລາວຕິດຄຸກຢູ່ໃນກຸງໂຣມ (ຟລມ. 23). ລາວເປັນຄົນພື້ນເມືອງຂອງເມືອງໂກໂລຊາຍ (ກລຊ. 4:12), ແລະ ເປັນຜູ້ທີ່ໄດ້ນຳຂ່າວປະເສີດໄປສູ່ເມືອງນັ້ນ (ກລຊ. 1:7).

ໂກໂລຊາຍແມ່ນເມືອງໜຶ່ງທີ່ຢູ່ໃນແຂວງຟີເຄຍ, ໃກ້ກັບລາວດີເກອາ ແລະ ຮາໂປລີ, ບ່ອນທີ່ທ່ານເອປາຟາໄດ້ເທດສະໜາ(ກລຊ. 4:13). ເມືອງນີ້ມີປະຊາກອນຢິວເປັນຈຳນວນຫລາຍ. ໜຶ່ງໃນຄົນຢິວຜູ້ມີຊື່ສຽງທີ່ອາໄສຢູ່ທີ່ນັ້ນກໍ່ຄື ຟີເລໂມນ ຜູ້ຮ່ວມງານຂອງໂປໂລ, ເຊິ່ງໃນບ້ານຂອງລາວແມ່ນບ່ອນຊຸມນຸມຂອງຄຣິສຕຽນ (ຟລມ. 1-2).

ໜຶ່ງໃນທາດຂອງຟີເລໂມນທີ່ຊື່ ໂອເນຊີໂມ ໄດ້ຫລົບໜີໄປທີ່ກຸງໂຣມ ແລະບ່ອນນັ້ນລາວໄດ້ຮັບເຊື່ອພຣະເຢຊູທາງອາຈານໂປໂລ (ຟລມ. 1:10-11). ໂດຍການສົ່ງໂຕ ໂອເນຊີໂມກັບໄປຫານາຍຂອງລາວ ໂປໂລໄດ້ສະແດງໃຫ້ເຫັນວ່າຄວາມສຳພັນລະຫວ່າງເຈົ້ານາຍ ແລະ ທາດ ຫລື ລະຫວ່າງຜູ້ມີອຳນາດ ກັບຜູ້ຢູ່ໃຕ້ອຳນາດນັ້ນ ຄວນຈະເປັນແບບໃດ (ຟລມ. 1:12-17).








# ຄຣິດຈະຈັກຂອງເມືອງຟີລິບປອຍ ແລະ ໂກໂລຊາຍ

"ຈາກໂປໂລ ແລະ ຕີໂມທຽວ ຜູ້ຮັບໃຊ້ຂອງພຣະຄຣິດເຈົ້າເຢຊູ ເຖິງໄພ່ພົນຂອງພຣະເຈົ້າທຸກຄົນໃນເມືອງຟີລິບປອຍທີ່ຢູ່ໃນພຣະຄຣິດ" (Philippians 1:1)

ຄຳນຳຂອງຈົດໝາຍທີ່ສົ່ງໄປເຖິງຊາວຟີລິບປອຍ ແລະ ຊາວໂກໂລຊາຍ ມີລັກສະນະຄ້າຍຄືກັນຢ່າງຍິ່ງ. ພວກເຮົາສາມາດເຫັນ 2 ປະເດັນຄື: (ຟລປ. 1:1; ກລຊ. 1:1-2)

ໃນສາຍພຣະເນດຂອງພຣະເຈົ້າ ສະມາຊິກເປັນຜູ້ບໍຣິສຸດ ແລະ ຊື່ສັດ, ເຖິງຈະມີຄວາມຜິດພາດກໍ່ຕາມ

ໃນຄຣິດຕະຈັກ ມີລະບຽບແບບແຜນ ເຊິ່ງສະມາຊິກບາງຄົນມີອຳນາດ ແລະ ຄວາມຮັບຜິດຊອບ ຫລາຍກວ່າຄົນອື່ນ

- ໂປໂລ ເປັນອັກຄະທູດ ເປັນຜູ້ນຳລະດັບສູງ
- ຕີໂມທຽວ ຜູ້ຊ່ວຍ (ອາຈານສາສະໜາ)
- ອາຈານປະຈຳທ້ອງຖິ່ນ (ຜູ້ປົກຄອງ)
- ຜູ້ຮັບໃຊ້ໃນຄຣິດຕະຈັກ ດຳເນີນການບໍຣິຫານ



ໃນຄຸກ, ອຈ. ໂປໂລ ຂອບໃຈຊາວຟີລິບປອຍ ສຳລັບຄວາມຊ່ວຍເຫລືອທີ່ພວກເຂົາສົ່ງມາໃຫ້ (ຟລປ. 4:18).

ສຳລັບຊາວໂກໂລຊາຍ ອຈ ໂປໂລ ໄດ້ສົ່ງຜູ້ຮ່ວມງານໄປປອບໂຍນພວກເຂົາ (ກລຊ. 4:7-9).

ສະຫລຸບຂໍ້ຄິດຂອງເນື້ອໃນບົດຮຽນ:

ອັກຄະສາວົກໂປໂລ ເຖິງວ່າຈະຕິດຄຸກຫລາຍໆຄັ້ງ, ຖືກລ່າມໂສ້ໄວ້ ເບິ່ງຄືວ່າຈະເຮັດໃຫ້ລາວໝົດຫົນທາງໃນການປະກາດ, ແຕ່ຄວາມຈິງກໍ່ຄື ລາວຍັງມີວິທີການປະກາດໃຫ້ກັບກຸ່ມຜູ້ເຊື່ອຖືໄດ້ຄືເກົ່າ ໂດຍການຂຽນຈົດໝາຍສົ່ງໄປຫາພວກເຂົາ, ຫລື ການສົ່ງຕິໂມທຽວໄປປອບໂຍນພວກເຂົາ. ລາວໄດ້ບອກພີ່ນ້ອງຜູ້ທີ່ມີຄວາມເຊື່ອໃຫ້ມີໃຈຊື່ນຊົມຍິນດີຕະຫລອດເວລາ ແລະ ຈົ່ງຮັກສາຄວາມສັດຊື່ໃນພຣະເຈົ້າເອົາໄວ້.

ການທີ່ຖືກຂົ່ມເຫັງ ບໍ່ໄດ້ໝາຍຄວາມວ່າພຣະເຈົ້າຊົງປະຖິ້ມພວກເຮົາ, ແຕ່ພຣະອົງຍັງຄົງໜູນໃຈ ແລະ ມອບກຳລັງໃຫ້ກັບພວກເຮົາໃນເວລາທີ່ຖືກຂົ່ມເຫັງນັ້ນ.

EGW (Reflecting Christ, December 10)

ສະນັ້ນໃຫ້ພວກເຮົາທັງຫລາຍ ຈົ່ງ:

1. ສືບຕໍ່ມີຄວາມຊື່ສັດ ເຖິງວ່າຈະຖືກຂົ່ມເຫັງ
2. ຊື່ນຊົມຍິນດີໃນພຣະເຈົ້າຕະຫລອດເວລາ ແທນການຈົ່ມວ່າ
3. ເຂົ້າໃຈເຖິງຈຸດປະສົງຂອງພຣະເຈົ້າ ໃນເວລາເກີດການທົດລອງ ຫລື ການຂົ່ມເຫັງ

ການຖືກຂົ່ມເຫັງ ຫລື ອຸປະສັກ ບໍ່ໄດ້ໝາຍຄວາມວ່າພຣະເຈົ້າປະຖິ້ມພວກເຮົາ ແຕ່ມັນໄດ້ຊັດເກົາຄວາມເຊື່ອທີ່ຢູ່ໃນຈິດໃຈ, ສ້າງເຮົາໃຫ້ເຂັ້ມແຂງຂຶ້ນ ແລະ ນຳຄວາມເຊື່ອທີ່ເຮົາມີນັ້ນສະແດງອອກເປັນຄຳພະຍານໃຫ້ກັບຄົນອື່ນ.

EGW (Reflecting Christ, December 10)

ສຳລັບປະຫວັດສາດຂອງເມືອງຟີລິບປອຍ ແລະ ໂກໂລຊາຍ ແມ່ນໃຫ້ພວກເຮົາຮູ້ເຖິງຄວາມເຊື່ອຂອງຄົນສະໄໝຄຣິດຕະຈັກໃນຍຸກຕົ້ນໆ. ໃຫ້ພວກເຮົາໄດ້ຮຽນຮູ້ຈາກພວກເຂົາວ່າພວກເຂົາພົບກັບອຸປະສັກຫຍັງແດ່, ພວກເຂົາເຮັດຫຍັງແດ່ເພື່ອພຣະເຈົ້າ ແລະ ເພື່ອໃຫ້ວຽກງານການປະກາດໄດ້ຂະຫຍາຍໂຕ.

ກ່ອນຄຣິດຕະຈັກຈະຂະຫຍາຍມາເຖິງທຸກມື້ນີ້ ຕ້ອງຜ່ານຫລາຍສິ່ງຫລາຍຢ່າງ, ແລະຜູ້ນຳກໍ່ຕ້ອງມີຄວາມອົດທົນ ແລະ ກ້າຫານ.

ໂດຍມີພຣະຄຣິດເປັນຜູ້ເສີມກຳລັງໃຫ້

EGW (Reflecting Christ, December 10)

“ຂໍໃຫ້ພວກເຮົາພິຈາລະນາ ປະສົບການຂອງ ອຈ ໂປໂລ ຈັກໜ້ອຍໜຶ່ງ. ໃນຂະນະທີ່ເບິ່ງຄືວ່າ ການຮັບໃຊ້ຂອງລາວນັ້ນ ເປັນທີ່ຕ້ອງການອັນສູງສຸດເພື່ອເສີມສ້າງຄຣິດຕະຈັກ ທີ່ຖືກທົດລອງ ແລະ ຖືກຂົ່ມເຫັງ. ເສລີພາບຂອງລາວ ຖືກພາກຈາກລາວໄປ ເພາະຕ້ອງຖືກລ່າມໂສ້ໄວ້. ແຕ່ເວລານີ້ ແມ່ນເວລາທີ່ພຣະເຈົ້າຊົງຖືວ່າລາວໄດ້ຮັບໄຊຊະນະທີ່ລ້ຳຄ່າ.

ເບິ່ງຄືວ່າການຕິດຄຸກຂອງ ອັກຄະທູດໂປໂລນັ້ນ ບໍ່ສາມາດເຮັດໃຫ້ລາວເຊົາປະກາດພຣະຄຳຂອງພຣະເຈົ້າແລ້ວ. ແຕ່ໃນຄວາມຈິງ ລາວກັບໃຊ້ເວລານັ້ນໃຫ້ເກີດປະໂຫຍດສູງສຸດ.

ຜ່ານການຕິດຄຸກຖືກຈອງຈຳນີ້ ລາວໄດ້ເປັນຜູ້ພິຊິດເພື່ອພຣະຄຣິດ, ຄວາມອົດທົນ ແລະ ຄວາມອ່ອນນ້ອມຖ່ອມໂຕ ທີ່ລາວຍອມຕໍ່ການຖືກກັກຂັງນັ້ນ ເຮັດໃຫ້ບັນດາຜູ້ຄົນທີ່ຄຸມຂັງລາວ ເລີ່ມພິຈາລະນະຕົນເອງວ່າ ເຮັດບໍ່ຖືກຕ້ອງ”

EGW (Reflecting Christ, December 10)